ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ກະຊວງຍຸຕິທຳ

ເລກທີ 1399 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 07 ກໍລະກົດ 2017

# ຂໍ້ຕົກລົງ
# ຂອງລັດຖະມົນຕີ ກະຊວງຍຸຕິທຳ
# ວ່າດ້ວຍການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 411/ນຍ, ລົງວັນທີ 10 ພະຈິກ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 46/ນຍ, ລົງວັນທີ 29 ກັນຍາ 2009 ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານຍຸຕິທຳຮາກຖານ;
- ອີງຕາມການຄົ້ນຄວ້າ ແລະ ການສະເໜີຂອງກົມສົ່ງເສີມລະບົບຍຸຕິທຳ.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ກວດກາການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນ ແນໃສ່ສຶກສາອົບຮົມໃຫ້ສະມາຊິກພາຍໃນຄອບຄົວ ແລະ ປະຊາຊົນພາຍໃນບ້ານຮັບຮູ້, ເຂົ້າໃຈລັດຖະທຳມະນູນ ແລະ ກົດໝາຍ ຢ່າງຖືກຕ້ອງເລິກເຊິ່ງ; ມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍນັບມື້ນັບເຂັ້ມງວດ, ເສີມຂະຫຍາຍມູນເຊື້ອສາມັກຄີປອງດອງພາຍໃນຄອບຄົວ, ພາຍໃນບ້ານໃຫ້ໜັກແໜ້ນ, ສະກັດກັ້ນ ແລະ ຕີຖອຍທຸກປະກົດການຫຍໍ້ທໍ້ທີ່ລະເມີດກົດໝາຍ, ປະກອບສ່ວນຢ່າງຫ້າວຫັນໃນການພັດທະນາຄອບຄົວ, ບ້ານ ໃຫ້ມີຄວາມເຂັ້ມແຂງ, ມີຄວາມສະເໝີພາບ, ຍຸຕິທຳ, ສ້າງຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕປະຊາຊົນທີ່ປົກຄອງດ້ວຍກົດໝາຍ.

### ມາດຕາ 2 ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ແມ່ນຂະບວນການຈັດຕັ້ງ ແລະ ການເຄື່ອນໄຫວສ້າງສະຕິຕື່ນຕົວເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບບ້ານ ໃຫ້ແກ່ສະມາຊິກຄອບ

ຄົວ ແລະ ປະຊາຊົນບັນດາເຜົ່າພາຍໃນບ້ານ ໂດຍເລີ່ມຈາກການດຳເນີນແຕ່ລະຄອບຄົວ, ບ້ານ, ເມືອງ, ແຂວງ, ນະຄອນຫຼວງ ໄປໃນຂອບເຂດທົ່ວປະເທດ ຕາມຂັ້ນຕອນ ແລະ ວິທີການທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄອບຄົວແບບຢ່າງປະຕິບັດກົດໝາຍ** ໝາຍເຖິງ ຄອບຄົວທີ່ມີສະມາຊິກໃນຄອບຄົວສ່ວນຫຼາຍ ໄດ້ຮັບການສຶກສາອົບຮົມກົດໝາຍຢ່າງທົ່ວເຖິງ, ມີຄວາມຮັບຮູ້ເຂົ້າໃຈຖືກຕ້ອງ, ມີສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບບ້ານຢ່າງເຂັ້ມງວດ;
2. **ບ້ານແບບຢ່າງປະຕິບັດກົດໝາຍ** ໝາຍເຖິງ ບ້ານທີ່ມີປະຊາຊົນສ່ວນຫຼາຍ ໄດ້ຮັບການສຶກສາອົບຮົມລັດຖະທຳມະນູນ, ກົດໝາຍຢ່າງທົ່ວເຖິງ, ມີຄວາມຮັບຮູ້ເຂົ້າໃຈຖືກຕ້ອງ, ມີສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບບ້ານຢ່າງເຂັ້ມງວດ;
3. **ຕູ້ປຶ້ມກົດໝາຍປະຈຳບ້ານ** ໝາຍເຖິງ ຕູ້ທີ່ທ້ອນໂຮມເກັບຮັກສາ, ສະສົມປຶ້ມກົດໝາຍ, ສິ່ງພິມອື່ນທີ່ບັນຈຸຄວາມຮູ້ກ່ຽວກັບກົດໝາຍ ເພື່ອສະໜອງ ແລະ ໃຫ້ການບໍລິການຂໍ້ມູນຂ່າວສານ ແກ່ປະຊາຊົນທຸກຊັ້ນຄົນພາຍໃນບ້ານ.

**ມາດຕາ 4 ຄວາມສຳຄັນຂອງການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ**

ການສ້າງຄອບຄົວ, ບ້ານແບບຢ່າງປະຕິບັດກົດໝາຍ ເປັນວຽກສຳຄັນ ແລະ ກໍແມ່ນເນື້ອໃນໜຶ່ງຂອງຂະບວນການກໍ່ສ້າງຮາກຖານການເມືອງ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຕາມຄຳສັ່ງແນະນຳຂອງກົມການເມືອງສູນກາງພັກ ເລກທີ 09/ກມສພ, ລົງວັນທີ 08 ມິຖຸນາ 2004 ແລະ ຄຳສັ່ງເພີ່ມເຕີມຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 09 ມິຖຸນາ 2008. ສະນັ້ນ, ວຽກນີ້ຈະຕ້ອງຖືກຫັນເປັນວຽກງານຂອງອົງຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ.

ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ມີຄວາມສຳຄັນ ດັ່ງນີ້:

1. ເປັນການປະກອບສ່ວນໂດຍກົງທີ່ສຳຄັນ ໃນການກໍ່ສ້າງຮາກຖານການເມືອງ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາຢ່າງຮອບດ້ານ;

2. ເປັນການສ້າງອະລິຍະທຳທາງດ້ານກົດໝາຍ, ໝາຍເຖິງການສ້າງຄວາມສີວິໄລ-ຍຸຕິທຳ, ຄວາມສາມັກຄີເອື້ອເຟື້ອບົນພື້ນຖານລັດຖະທຳມະນູນ, ກົດໝາຍໃຫ້ແກ່ສະມາຊິກຄອບຄົວ ແລະ ປະຊາຊົນພາຍໃນບ້ານ;

3. ເປັນການສ້າງສະຕິຕື່ນຕົວເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ກົດລະບຽບບ້ານ ແລະ ປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນບ້ານ;

4. ແມ່ນການຕໍ່ສູ້ຂອງອົງການປົກຄອງ, ປະຊາຊົນພາຍໃນບ້ານ ແລະ ສະມາຊິກພາຍໃນຄອບຄົວ ຕ້ານ, ສະກັດກັ້ນ ແລະ ແກ້ໄຂສິ່ງຫຍໍ້ທໍ້ທາງສັງຄົມທີ່ລະເມີດກົດໝາຍ ເຊັ່ນ: ສິ່ງເສບຕິດ, ການຄ້າຂາຍເຖື່ອນ, ການລັກເລັກຂະໂມຍນ້ອຍ, ການປຸ້ນຈີ້, ການມົ້ວສຸມການພະນັນ, ການຕີວະຕົ້ມ, ສໍ້ໂກງ, ການເປັນໂສເພນີ, ການຄ້າປະເວນີ ແລະ ອື່ນໆ;

5. ເປັນການສະກັດກັ້ນ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນພາຍໃນບ້ານ ໂດຍສັນຕິວິທີ, ເຮັດໃຫ້ສັງຄົມ ມີຄວາມສະຫງົບ, ຍຸຕິທຳ ແລະ ສະເໝີພາບຕໍ່ໜ້າກົດໝາຍ;

6. ເປັນວຽກທີ່ລະອຽດອ່ອນພົວພັນເຖິງຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກສັບສົນບໍ່ໜ້ອຍ, ສະນັ້ນ ຈຶ່ງຕ້ອງດຳເນີນໄປເທື່ອລະກ້າວຢ່າງໜັກແໜ້ນ ໂດຍຕິດພັນກັບຂະບວນການລວມຂອງການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ບ້ານປ້ອງກັນຄວາມສະຫງົບ, ບ້ານປອດຢາເສບຕິດ... ບ້ານປອດໝັ້ນສູ້ຮົບ, ບ້ານວັດທະນະທຳ, ບ້ານແບບຢ່າງດ້ານສາທາລະນະສຸກ ແລະ ອື່ນໆ.

### ມາດຕາ 5 ຫຼັກການຂອງການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ແມ່ນປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບບ້ານ;
2. ສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
3. ສົ່ງເສີມຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ແລະ ຂອງຊາດ;
4. ເສີມຂະຫຍາຍສິດເປັນເຈົ້າ ຂອງແຕ່ລະຄອບຄົວ ແລະ ປະຊາຊົນພາຍໃນບ້ານ;
5. ຕິດພັນກັບຂະບວນການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ;
6. ນຳພາ ແລະ ຄຸ້ມຄອງຢ່າງເປັນເອກະພາບຂອງອົງຄະນະພັກ, ອົງການປົກຄອງທ້ອງຖິ່ນ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 6 ມາດຕະຖານຄອບຄົວແບບຢ່າງປະຕິບັດກົດໝາຍ

ຄອບຄົວແບບຢ່າງປະຕິບັດກົດໝາຍ ແມ່ນຄອບຄົວທີ່ໄດ້ຮັບການພັດທະນາສ້າງສະຕິເຄົາລົບ ກົດໝາຍຕາມມາດຕະຖານ ດັ່ງນີ້:

1. ສະມາຊິກຄອບຄົວ ກວມອັດຕາສ່ວນ 95% ຂອງຈຳນວນສະມາຊິກຄອບຄົວທັງໝົດ ໄດ້ຮັບການສຶກສາອົບຮົມ, ຮຽນຮູ້ກົດໝາຍ ຕາມປຶ້ມຄູ່ມືເນື້ອໃນໂຄສະນາອົບຮົມກົດໝາຍ ທີ່ກະຊວງຍຸຕິທຳວາງອອກ ຍົກເວັ້ນບຸກຄົນທີ່ຂາດຄວາມສາມາດທາງດ້ານການປະພຶດ;

ສຳລັບສະມາຊິກຄອບຄົວໃນໄວອາຍຸເດັກ (ຫຼື ຕ່ຳກວ່າ 18 ປີ ລົງມາ) ຕ້ອງໄດ້ຮັບການສຶກສາຮ່ຳຮຽນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

2. ສະມາຊິກຄອບຄົວ ກວມເອົາອັດຕາສ່ວນ 85% ຂອງຈຳນວນສະມາຊິກຄອບຄົວທັງໝົດ ມີສະຕິສູງໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນບ້ານ, ຕື່ນຕົວປະຕິບັດສິດ ແລະ ພັນທະຂອງພົນລະເມືອງຕາມລັດຖະທຳມະນູນ ແລະ ກົດໝາຍ ຢ່າງຄົບຖ້ວນ;

3. ສະມາຊິກຄອບຄົວ ກວມອັດຕາສ່ວນ 95% ຂອງຈຳນວນສະມາຊິກຄອບຄົວທັງໝົດ ມີຄວາມສາມັກຄີຮັກແພງ, ມີຄວາມອົບອຸ່ນ ແລະ ສະເໝີພາບບົນພື້ນຖານກົດໝາຍ, ເຂົ້າຮ່ວມ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາ ຄອບຄົວ ແລະ ບ້ານໃຫ້ມີຊີວິດໃໝ່ທີ່ດີຂຶ້ນ, ຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ພາຍໃນຄອບຄົວ ໄດ້ຮັບການແກ້ໄຂດ້ວຍການປະນີປະນອມຢ່າງສັນຕິວິທີ;

4. ໃນຕະຫຼອດປີ ສະມາຊິກຄອບຄົວບໍ່ມີຜູ້ໃດພົວພັນກັບປະກົດການຫຍໍ້ທໍ້ຕ່າງໆເຊັ່ນ: ລັກເລັກຂະໂມຍນ້ອຍ, ເປັນໂສເພນີ, ຄ້າປະເວນີ, ຕີອະຕົ໊ມຜູ້ອື່ນ, ຢາເສບຕິດ, ຄ້າຂາຍເຖື່ອນ ແລະ ອື່ນໆ;

5. ໃນຕະຫຼອດປີ ສະມາຊິກຄອບຄົວບໍ່ມີບຸກຄົນໃດຖືກດຳເນີນຄະດີຕາມຂະບວນການຍຸຕິທຳ ຍ້ອນມີການກະທຳທີ່ລະເມີດກົດໝາຍ.

**ມາດຕາ 7 ມາດຕະຖານບ້ານແບບຢ່າງປະຕິບັດກົດໝາຍ.**

ບ້ານແບບຢ່າງປະຕິບັດກົດໝາຍ ແມ່ນບ້ານທີ່ໄດ້ຮັບການພັດທະນາທາງດ້ານສະຕິເຄົາລົບກົດໝາຍ ຕາມມາດຕະຖານດັ່ງນີ້:

1. ປະຊາຊົນພາຍໃນບ້ານ ກວມອັດຕາສ່ວນ 95% ຂອງຈຳນວນປະຊາກອນ ໄດ້ຮັບການສຶກສາອົບຮົມ, ຮຽນຮູ້ກ່ຽວກັບລະບຽບກົດໝາຍ ຕາມປຶ້ມຄູ່ມືເນື້ອໃນໂຄສະນາກົດໝາຍ ທີ່ກະຊວງຍຸຕິທຳວາງອອກ ແລະ ຢ່າງຕໍ່າ 85% ຂອງຈຳນວນປະຊາຊົນພາຍໃນບ້ານ ແມ່ນມີສະຕິຕື່ນຕົວສູງໃນການເຄົາລົບກົດໝາຍ, ກົດລະບຽບບ້ານ, ປະຕິບັດສິດ ແລະ ພັນທະຂອງພົນລະເມືອງຢ່າງຖືກຕ້ອງ, ຄົບຖ້ວນຕາມລັດຖະທຳມະນູນ ແລະ ກົດໝາຍ;

2. ປະຊາຊົນພາຍໃນບ້ານ ກວມອັດຕາສ່ວນ 95% ຂອງຈຳນວນຄອບຄົວ ແມ່ນມີຄວາມສາມັກຄີເປັນປຶກແຜ່ນບົນພື້ນຖານລະບຽບກົດໝາຍ ແລະ ກົດລະບຽບບ້ານ ມີຄວາມຫ້າວຫັນເຂົ້າຮ່ວມທຸກວຽກງານ ໃນການພັດທະນາບ້ານໃຫ້ເຂັ້ມແຂງເປັນກ້າວໆ;

3. ປະຊາຊົນພາຍໃນບ້ານ ກວມອັດຕາສ່ວນ 95% ຂອງຈຳນວນປະຊາກອນ ບໍ່ມີການພົວພັນກັບການຄ້າຂາຍເຖື່ອນ, ຢາເສບຕິດ, ລັກເລັກຂະໂມຍນ້ອຍ, ເປັນໂສເພນີ, ຄ້າປະເວນີ ແລະ ອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນບ້ານ;

4. ປະຊາຊົນພາຍໃນບ້ານ ກວມອັດຕາສ່ວນ 95% ຂອງຈຳນວນຄອບຄົວ ມີຄວາມເປັນເຈົ້າການສະກັດກັ້ນບໍ່ໃຫ້ເກີດຂໍ້ຂັດແຍ່ງ ຫຼື ເປັນເຈົ້າການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນດ້ວຍການປະນີປະນອມຢ່າງສັນຕິວິທີ;

5. ອົງການປົກຄອງບ້ານ ໄດ້ມີການປັບປຸງແບບແຜນວິທີເຮັດວຽກ ແລະ ຫັນການບໍລິຫານວຽກງານໄປສູ່ກົດໝາຍເທື່ອລະກ້າວ, ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ກວມອັດຕາສ່ວນ 95% ໄດ້ຮຽນກົດໝາຍຊັ້ນຕົ້ນ, ສິດ ແລະ ໜ້າທີ່ຂອງຄະນະແກ້ໄຂຂໍ້ຂັດແຍ່ງ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 404/ກຍ, ລົງວັນທີ 28 ເມສາ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແລະ 90% ຂອງຈຳນວນສະມາຊິກຄະນະແກ້ໄຂຂໍ້ຂັດແຍ່ງ ຮູ້ນຳພາປະຊາຊົນແກ້ໄຂຂໍ້ຂັດແຍ່ງຕ່າງໆດ້ວຍການປະນີປະນອມຢ່າງສັນຕິວິທີ;

6. ໃນຕະຫຼອດປີ ປະຊາຊົນພາຍໃນບ້ານບໍ່ມີບຸກຄົນໃດຖືກດຳເນີນຄະດີຕາມຂະບວນຍຸຕິທຳ ຍ້ອນມີການກະທຳທີ່ລະເມີດກົດໝາຍ.

## ໝວດທີ 2

## ຂັ້ນຕອນ, ວິທີການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

**ມາດຕາ 8 ຂັ້ນຕອນຂອງການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ.**

ການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ ຕ້ອງດຳເນີນໄປຕາມຂັ້ນຕອນ ດັ່ງນີ້:

1. ການກະກຽມ

- ຫ້ອງການຍຸຕິທຳເມືອງ ຕ້ອງຄົ້ນຄວ້າກຳແໜ້ນຈຸດປະສົງລະດັບຄາດໝາຍ, ເນື້ອໃນ, ມາດຕະຖານ ແລະ ວິທີການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລ້ວສົມທົບກັບໜ່ວຍງານກໍ່ສ້າງຮາກຖານການເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ຄົ້ນຄວ້າ, ສ້າງແຜນການກ່ຽວກັບການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍເພື່ອຂໍອະນຸມັດຈາກຄະນະພັກຮາກຖານກຸ່ມບ້ານ ແລະ ອົງການປົກຄອງເມືອງ;

- ເນື້ອໃນການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ ຕ້ອງກຳນົດຈະແຈ້ງຈຳນວນຄອບຄົວເປົ້າໝາຍທີ່ຈະສ້າງເປັນຄອບຄົວແບບຢ່າງປະຕິບັດກົດໝາຍ;

- ກຳນົດຈຸດປະສົງລະດັບຄາດໝາຍ, ເນື້ອໃນ, ເວລາຈັດຕັ້ງປະຕິບັດ ແລະ ມອບຄວາມຮັບຜິດຊອບໃຫ້ຫົວໜ້າຄອບຄົວ ຫຼື ຫົວໜ້າໜ່ວຍເປັນຜູ້ຄຸ້ມຄອງ, ຕິດຕາມ, ປະເມີນການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ;

- ຄົ້ນຄວ້າ, ກຳແໜ້ນສະພາບການຮອບດ້ານ ຂອງສະມາຊິກພາຍໃນຄອບຄົວ ເຊັ່ນ: ການຜະລິດ, ວິຊາຊີບ, ຊີວິດການເປັນຢູ່, ຈິດຕະສາດ, ຮີດຄອງປະເພນີ, ການເຊື່ອຖື, ປະກົດການຫຍໍ້ທໍ້ ແລະ ອື່ນໆ;

- ຕ້ອງມີການກະກຽມບັນດາເອກະສານ, ປັດໄຈຕ່າງໆ ແລະ ການປະສານສົມທົບໃຫ້ດີ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

2. ຈັດຕັ້ງຮໍ່າຮຽນເອກະສານ, ສຶກສາອົບຮົມແນວຄິດ

- ຈັດຕັ້ງຮໍ່າຮຽນເອກະສານຕ່າງໆເປັນຕົ້ນເນື້ອໃນ, ມາດຕະຖານ ແລະ ວິທີການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍໄປພ້ອມກັບການສຶກສາອົບຮົມແນວຄິດໃຫ້ສະມາຊິກຂອງຄອບຄົວເປົ້າໝາຍ ເພື່ອເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

- ສະມາຊິກຄອບຄົວແຕ່ລະຄົນ ຕ້ອງມີຂໍ້ຜູກພັນສັນຍາກັບຫົວໜ້າຄອບຄົວ ເພື່ອພ້ອມກັນສ້າງຄອບຄົວຂອງຕົນໃຫ້ເປັນຄອບຄົວແບບຢ່າງປະຕິບັດກົດໝາຍ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

3. ການຜັນຂະຫຍາຍ, ການຕິດຕາມ, ກວດກາ ແລະ ຊຸກຍູ້

- ອົງການປົກຄອງບ້ານ ແລະ ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງເອົາໃຈໃສ່ຕິດຕາມ, ກວດກາ, ແນະນຳ ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ ຂອງບັນດາຄອບຄົວເປົ້າໝາຍເປັນແຕ່ລະເດືອນ, ຖ້າອັນໃດບໍ່ທັນສອດຄ່ອງກໍໃຫ້ແນະນຳ ຫຼື ແກ້ໄຂໃຫ້ທັນເວລາ;

- ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍຕ່າງໆ ເຊັ່ນ: ກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ, ກົດໝາຍວ່າດ້ວຍຢາເສບຕິດ ໃຫ້ສະມາຊິກທຸກຄົນໃນຄອບຄົວ ໄດ້ຮັບຮູ້ເຂົ້າໃຈຢ່າງທົ່ວເຖິງ.

4. ການປະເມີນຜົນ ແລະ ຮັບຮອງຄອບຄົວແບບຢ່າງປະຕິບັດກົດໝາຍ.

- ຄະນະພັກຮາກຖານກຸ່ມບ້ານຊີ້ນຳໃຫ້ໜ່ວຍພັກ ແລະ ອົງການປົກຄອງບ້ານ ຈັດຕັ້ງປະເມີນຜົນການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ ແລະ ກວດກາການປະເມີນຜົນ;

- ອົງການປົກຄອງບ້ານ ນຳພາຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ຫົວໜ້າໜ່ວຍຄອບຄົວ ເພື່ອດຳເນີນການສະຫຼຸບ, ຕີລາຄາປະເມີນຜົນການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍຕາມມາດຕະຖານທີ່ໄດ້ກຳນົດໄວ້ ແລະ ສະ

ຫຼຸບການປະເມີນຜົນໃນທົ່ວບ້ານ;

- ຫົວໜ້າຫ້ອງການຍຸຕິທຳເມືອງ ເປັນຜູ້ເຊັນຮັບຮອງ ແລະ ອອກໃບຢັ້ງຢືນຄອບຄົວແບບຢ່າງປະຕິບັດກົດໝາຍ ຕາມການສະເໜີຂອງນາຍບ້ານ ພາຍຫຼັງໄດ້ຮັບຄຳເຫັນດີຈາກເລຂາຄະນະພັກຮາກຖານກຸ່ມບ້ານ;

- ການປະກາດ ແລະ ມອບໃບຢັ້ງຢືນໃຫ້ຄອບຄົວແບບຢ່າງປະຕິບັດກົດໝາຍ ໃຫ້ເຮັດພ້ອມດຽວກັນກັບການປະກາດບ້ານແບບຢ່າງປະຕິບັດກົດໝາຍເລີຍ;

- ຖ້າບ້ານໃດມີເງື່ອນໄຂກໍສາມາດປະກາດ ແລະ ມອບໃບຢັ້ງຢືນຄອບຄົວແບບຢ່າງປະຕິບັດກົດໝາຍໄດ້ໂດຍຍາດເວລາລວມກັນ ເພື່ອສະຫຼຸບສັງລວມຜົນການສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ ແລະ ວາງທິດທາງ, ມາດຕະການ ເພື່ອສືບຕໍ່ປົກປັກຮັກສາ ແລະ ສ້າງຄອບແບບຢ່າງປະຕິບັດກົດໝາຍ ແລ້ວມອບໃບຢັ້ງຢືນຄອບຄົວແບບຢ່າງປະຕິບັດກົດໝາຍພ້ອມເລີຍ ແລະ ບໍ່ຈຳເປັນຕິດຄຳຂວັນ.

**ມາດຕາ 9 ຂັ້ນຕອນຂອງການສ້າງບ້ານແບບຢ່າງປະຕິບັດກົດໝາຍ.**

ການສ້າງບ້ານແບບຢ່າງປະຕິບັດກົດໝາຍ ຕ້ອງດຳເນີນໄປຕາມຂັ້ນຕອນ ດັ່ງນີ້:

**1. ການກະກຽມ**

- ພະແນກຍຸຕິທຳນະຄອນຫຼວງ, ແຂວງ ແລະ ຫ້ອງການຍຸຕິທຳເມືອງ ຕ້ອງຄົ້ນຄວ້າ, ກຳແໜ້ນຈຸດປະສົງລະດັບຄາດໝາຍ, ເນື້ອໃນ, ມາດຕະຖານ ແລະ ວິທີຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລ້ວຄົ້ນຄວ້າສ້າງແຜນການກ່ຽວກັບການສ້າງບ້ານແບບຢ່າງປະຕິບັດກົດໝາຍໃນທົ່ວແຂວງ, ນະຄອນຫຼວງ, ເມືອງ ເພື່ອຂໍອະນຸມັດຈາກຄະນະພັກ ແລະ ອົງການການປົກຄອງແຂວງ, ນະຄອນຫຼວງ, ເມືອງ ແລະ ກຸ່ມບ້ານ ໂດຍມີການສົມທົບກັບໜ່ວຍງານກໍ່ສ້າງຮາກຖານການເມືອງ, ຫ້ອງວ່າການ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ, ຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;

- ການກຳນົດບ້ານເປົ້າໝາຍ ສຳລັບການສ້າງເປັນບ້ານແບບຢ່າງປະຕິບັດກົດໝາຍ ແມ່ນໃຫ້ອີງໃສ່ສະພາບການ ແລະ ເງື່ອນໄຂຕົວຈິງຂອງແຕ່ລະແຂວງ, ນະຄອນຫຼວງ, ເມືອງ, ກຸ່ມບ້ານ ແລະ ບ້ານ, ໃນນີ້ໃຫ້ເລືອກເອົາບ້ານທີ່ເປັນບ້ານຈຸດສຸມພັດທະນາຂອງແຂວງ, ນະຄອນຫຼວງ, ເມືອງ, ກຸ່ມບ້ານ ແລະ ບ້ານເປັນບ້ານບຸລິມະສິດ ໃນການດຳເນີນ ຫຼື ບ້ານທີ່ມີຄວາມສັບສົນ, ມີປະກົດການຫຍໍ້ທໍ້ຫຼາຍກວ່າໝູ່ ເປັນບ້ານເປົ້າໝາຍໃນການສ້າງເປັນບ້ານແບບຢ່າງປະຕິບັດກົດໝາຍ;

- ຕ້ອງກະກຽມບັນດາເອກະສານ, ຄ່າໃຊ້ຈ່າຍທີ່ຈຳເປັນ, ບຸກຄະລາກອນ, ປັດໄຈຕ່າງໆ ແລະ ການປະສານສົມທົບໃຫ້ດີ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

- ຄົ້ນຄວ້າ, ກຳແໜ້ນສະພາບການຮອບດ້ານຂອງປະຊາຊົນພາຍໃນບ້ານນັ້ນ ເຊັ່ນ: ສະພາບການເມືອງ, ແນວຄິດ, ການຜະລິດ, ວິຊາຊີບ, ຊີວິດການເປັນຢູ່, ຊົນເຜົ່າ, ຈິດຕະສາດ, ການພົວພັນຮີດຄອງປະເພນີ, ການເຊື່ອຖື, ຂໍ້ຂັດແຍ່ງ ຫຼື ປະກົດການຫຍໍ້ທໍ້ຕ່າງໆທີ່ຈະຕ້ອງແກ້ໄຂ ແລະ ບັນຫາອື່ນໆ.

**2. ຈັດຕັ້ງຮ່ຳຮຽນເອກະສານ, ສຶກສາອົບຮົມແນວຄິດ ແລະ ຝຶກອົບຮົມຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

- ຈັດຕັ້ງຮ່ຳຮຽນເອກະສານຕ່າງໆເປັນຕົ້ນ ເນື້ອໃນ, ມາດຕະຖານ, ແຜນການ ແລະ ວິທີການສ້າງບ້ານແບບຢ່າງປະຕິບັດກົດໝາຍ ແລະ ຄູ່ມືເນື້ອໃນໂຄສະນາກົດໝາຍ ໃຫ້ພະນັກງານຮາກຖານບ້ານ ແລະ ກຸ່ມບ້ານ ເຊັ່ນ: ພະນັກງານກໍ່ສ້າງຮາກຖານ, ອົງການປົກຄອງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ຫົວໜ້າຊີ້ງຊາວ,

ອົງການຊາວໜຸ່ມ, ອົງການຈັດຕັ້ງສະຫະພັນແມ່ຍິງ, ປກສ ບ້ານ, ຫົວໜ້າ ແລະ ສະມາຊິກຂອງຄະນະແກ້ໄຂຂໍ້ຂັດແຍ່ງຂອງບ້ານ, ຫົວໜ້າໜ່ວຍຄອບຄົວ ແລະ ອື່ນໆ ເພື່ອເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະ ກໍາແໜ້ນແຜນການ, ເນື້ອໃນ, ມາດຕະຖານ ແລະ ຂັ້ນຕອນຂອງການສ້າງບ້ານແບບຢ່າງປະຕິບັດກົດໝາຍ;

- ສ້າງຂໍ້ຜູກພັນລະຫວ່າງແຕ່ລະຄອບຄົວ ກັບອົງການປົກຄອງບ້ານ ເພື່ອພ້ອມກັນສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ, ເປັນເຈົ້າການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆພາຍໃນແຕ່ລະຄອບຄົວ;

- ສຶກສາອົບຮົມ ແລະ ແກ້ໄຂເປົ້າໝາຍຂອງປະກົດການຫຍໍ້ທໍ້ຕ່າງໆພາຍໃນບ້ານ ເຊັ່ນ: ຜູ້ຕິດຢາເສບຕິດ, ຜູ້ຄ້າຂາຍເຖື່ອນ, ຜູ້ລັກເລັກຂະໂມຍນ້ອຍ, ຜູ້ເປັນໂສເພນີ, ຄ້າປະເວນີ, ການພະນັນທີ່ຕ້ອງຫ້າມ, ຮ້ານບັນເທີງ ແລະ ຮ້ານກິນດື່ມທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ຫຼື ຂັດກັບຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ.

**3. ການຜັນຂະຫຍາຍ, ການຕິດຕາມ, ກວດກາ ແລະ ຊຸກຍູ້**

- ກວດກາຄືນບັນດາຂໍ້ກໍານົດ, ກົດລະບຽບຕ່າງໆຂອງບ້ານ, ແບບແຜນວິທີເຮັດວຽກ ຂອງອົງການປົກຄອງບ້ານ, ໂຄງປະກອບ, ແບບແຜນວິທີເຮັດວຽກຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຖ້າເຫັນວ່າຍັງບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງກັບກົດໝາຍ, ດໍາລັດ, ຄໍາສັ່ງ, ແຈ້ງການ, ຂໍ້ຕົກລົງຂອງຂັ້ນເທິງແລ້ວ ກໍຕ້ອງແນະນໍາໃຫ້ອົງການປົກຄອງບ້ານປັບປຸງຄືນເພື່ອໃຫ້ສອດຄ່ອງ ໂດຍຜ່ານການທາບທາມຄໍາຄິດຄໍາເຫັນ ຈາກສະມາຊິກອົງການຈັດຕັ້ງມະຫາຊົນຕ່າງໆ ແລະ ປະຊາຊົນພາຍໃນບ້ານ;

- ຕິດຕາມ, ກວດກາ, ແນະນໍາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງຂອງບັນດາບ້ານຈຸດສຸມ ຫຼື ບ້ານເປົ້າໝາຍທີ່ຈະສ້າງເປັນບ້ານແບບຢ່າງປະຕິບັດກົດໝາຍເປັນປະຈໍາແຕ່ລະເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ, ຖ້າອັນໃດບໍ່ທັນສອດຄ່ອງກໍໃຫ້ແນະນໍາ ຫຼື ແກ້ໄຂໃຫ້ທັນເວລາ;

- ຈັດຕັ້ງຮໍ່າຮຽນກົດໝາຍຕ່າງໆ ໃຫ້ແກ່ປະຊາຊົນພາຍໃນບ້ານໃຫ້ຄົບຕາມປື້ມຄູ່ມືເນື້ອໃນໂຄສະນາກົດໝາຍ, ໃຫ້ແບ່ງເວລາຈັດຕັ້ງຮໍ່າຮຽນກົດໝາຍເດືອນໜຶ່ງຢ່າງໜ້ອຍໜຶ່ງເທື່ອ ໃຫ້ທົ່ວເຖິງທຸກຄົນ ແລະ ຈົນຄົບທຸກກົດໝາຍທີ່ກໍານົດຢູ່ໃນປື້ມຄູ່ມືເນື້ອໃນໂຄສະນາກົດໝາຍຂອງກະຊວງຍຸຕິທໍາ.

**4. ການສະຫຼຸບ, ຕີລາຄາ ແລະ ປະເມີນຜົນ**

- ພະແນກຍຸຕິທໍາແຂວງ, ນະຄອນຫຼວງ ໂດຍສົມທົບກັບຫ້ອງການກໍ່ສ້າງຮາກຖານການເມືອງຂອງ ແຂວງ, ນະຄອນຫຼວງ ອອກຄໍາແນະນໍາ ຫຼື ຊີ້ນໍາໃຫ້ຫ້ອງການຍຸຕິທໍາເມືອງ ແລະ ໜ່ວຍງານກໍ່ສ້າງຮາກຖານການເມືອງສົມທົບກັນກະກຽມ ແລະ ສະຫຼຸບ, ຕີລາຄາ, ປະເມີນຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍ ໃນທົ່ວແຂວງ, ນະຄອນຫຼວງ;

- ຫ້ອງການຍຸຕິທໍາເມືອງ ແລະ ໜ່ວຍງານກໍ່ສ້າງຮາກຖານການເມືອງສົມທົບກັນກະກຽມເອກະສານ, ບັນດານິຕິກໍາ, ຄໍາແນະນໍາ ຫຼື ຂໍ້ຕົກລົງກ່ຽວກັບການຈັດຕັ້ງດໍາເນີນການປະເມີນຜົນບ້ານແບບຢ່າງປະຕິບັດກົດໝາຍເພື່ອຂໍໃຫ້ເຈົ້າເມືອງເຊັນ ຫຼື ອະນຸຍາດໃຫ້ຈັດຕັ້ງປະຕິບັດ ແລ້ວແນະນໍາໃຫ້ແຕ່ລະກຸ່ມບ້ານ ແລະ ບ້ານເປັນຜູ້ຈັດຕັ້ງປະຕິບັດການສະຫຼຸບ, ຕີລາຄາ, ປະເມີນຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍ ໃນແຕ່ລະບ້ານ ກໍຄືໃນທົ່ວກຸ່ມບ້ານ ແລະ ການດໍາເນີນການປະເມີນຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍໃນທົ່ວເມືອງຂອງຕົນ;

- ຄະນະພັກຮາກຖານກຸ່ມບ້ານ ຊີ້ນໍາ-ນໍາພາໃຫ້ອົງການປົກຄອງບ້ານເປັນເຈົ້າການສະຫຼຸບຕີລາຄາ, ປະເມີນຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍໃນແຕ່ລະປີ;

- ໃນກໍລະນີຈໍາເປັນອາດຈະຈັດຕັ້ງຄະນະຮັບຜິດຊອບປະເມີນຜົນ ການສ້າງບ້ານແບບຢ່າງປະຕິບັດກົດໝາຍໂດຍສະເພາະ ຫຼື ຮ່ວມກັບຄະນະປະເມີນຜົນບ້ານພັດທະນາ ເພື່ອດໍາເນີນການປະເມີນ;

- ການສະຫຼຸບ, ຕີລາຄາ, ປະເມີນຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍ ໃຫ້ອີງໃສ່ບັນດາເນື້ອໃນ, ມາດຕະຖານ, ຂັ້ນຕອນ ແລະ ວິທີການທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ພ້ອມກັນນັ້ນກໍໃຫ້ອີງໃສ່ໝາກຜົນ ແລະ ຈຸດພິເສດຕົວຈິງໃນການຈັດຕັ້ງປະຕິບັດຢູ່ໃນແຕ່ລະກຸ່ມບ້ານ ແລະ ບ້ານ;

- ໃນແຕ່ລະປີ ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ ແລະ ກຸ່ມບ້ານ ຕ້ອງສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລ້ວກຳນົດທິດທາງ, ແຜນການ ແລະ ວິທີການກ່ຽວກັບການສືບຕໍ່ສ້າງບ້ານແບບຢ່າງປະຕິບັດກົດໝາຍຢູ່ໃນຂັ້ນຂອງຕົນໃຫ້ທັນເວລາ ແລະ ຕໍ່ເນື່ອງ.

**5. ການຮັບຮອງ ແລະ ປະກາດບ້ານແບບຢ່າງປະຕິບັດກົດໝາຍ**

- ພາຍຫຼັງໄດ້ຮັບລາຍງານຂອງແຕ່ລະກຸ່ມບ້ານ ແລະ ບ້ານແລ້ວ ຫ້ອງການຍຸຕິທຳເມືອງຕ້ອງສົມທົບກັບໜ່ວຍງານກໍ່ສ້າງຮາກຖານ ແລະ ພາກສ່ວນກ່ຽວຂ້ອງເພື່ອກວດກາ, ຕີລາຄາຄືນກ່ຽວກັບຜົນຂອງການສ້າງບ້ານແບບຢ່າງປະຕິບັດກົດໝາຍ ແລ້ວລາຍງານໃຫ້ເຈົ້າເມືອງ ເພື່ອອອກຂໍ້ຕົກລົງ ແລະ ໃບຢັ້ງຢືນຮັບຮອງເອົາເປັນບ້ານແບບຢ່າງປະຕິບັດກົດໝາຍ;

- ຫ້ອງການຍຸຕິທຳເມືອງສົມທົບກັບອົງການປົກຄອງບ້ານ ເພື່ອກະກຽມເນື້ອໃນ ແລະ ວຽກງານຕ່າງໆເພື່ອຈັດພິທີປະກາດບ້ານແບບຢ່າງປະຕິບັດກົດໝາຍ;

- ພິທີປະກາດບ້ານແບບຢ່າງປະຕິບັດກົດໝາຍໃຫ້ອີງໃສ່ເງື່ອນໄຂ ແລະ ສະພາບຕົວຈິງຂອງແຕ່ລະບ້ານ ເພື່ອຈັດຕັ້ງໃຫ້ເໝາະສົມ, ປະຢັດ ແລະ ກະທັດລັດ, ອາດຈະຈັດຕັ້ງພິທີສະເພາະຕ່າງຫາກ ຫຼື ເຮັດຮ່ວມກັບພິທີປະກາດນາມມະຍົດອື່ນໆກໍໄດ້;

- ເນື້ອໃນພິທີປະກາດບ້ານແບບຢ່າງປະຕິບັດກົດໝາຍ ໃຫ້ມີບົດສະຫຼຸບ ຜົນການສ້າງບ້ານແບບຢ່າງປະຕິບັດກົດໝາຍ ແລະ ຜ່ານທິດທາງສືບຕໍ່ປົກປັກຮັກສາ ແລະ ສ້າງບ້ານແບບຢ່າງປະຕິບັດກົດໝາຍ, ອ່ານຂໍ້ຕົກລົງຮັບຮອງ, ມອບໃບຢັ້ງຢືນບ້ານແບບຢ່າງປະຕິບັດກົດໝາຍ ແລ້ວເປີດປ້າຍບ້ານແບບຢ່າງປະຕິບັດກົດໝາຍ;

ສຳລັບຄຳຂວັນຕິດພິທີປະກາດບ້ານແບບຢ່າງປະຕິບັດກົດໝາຍມີດັ່ງນີ້ :

(1). ຊົມເຊີຍບ້ານ... ເປັນບ້ານແບບຢ່າງປະຕິບັດກົດໝາຍຢ່າງສຸດໃຈ !

(2). ພ້ອມກັນປົກປັກຮັກສາບ້ານເຮົາໃຫ້ເປັນບ້ານແບບຢ່າງປະຕິບັດກົດໝາຍຕະຫຼອດໄປ !

- ສຳລັບໃບຢັ້ງຢືນຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ແມ່ນກະຊວງຍຸຕິທຳ ຈະເປັນຜູ້ກຳນົດທາງດ້ານເນື້ອໃນ, ຂະໜາດ ແລະ ຮູບແບບ;

- ສຳລັບປ້າຍບ້ານແບບຢ່າງປະຕິບັດກົດໝາຍ ແມ່ນມອບໃຫ້ອົງການປົກຄອງບ້ານເປັນຜູ້ຮັບຜິດຊອບ ໂດຍກົງ. ຂະໜາດປ້າຍ ໃຫ້ປະຕິບັດເປັນເອກະພາບກັນ ຄື: ກ້ວາງ 0,60 ແມັດ ແລະ ຍາວ 1,20 ແມັດ ພື້ນສີຟ້າແກ່, ໜັງສືສີຂາວ, ຂະໜາດ ຂອງຕົວໜັງສືແມ່ນໃຫ້ເໝາະສົມກັບຂະໜາດຂອງປ້າຍ, ສາມາດເຫັນ, ອ່ານ ແລະ ເຂົ້າໃຈງ່າຍ. ຖ້າຈະຂຽນພາສາສາກົນໃສ່ຕ້ອງຂຽນຕົວໜັງສືນ້ອຍກວ່າ ແລະ ຢູ່ລຸ່ມພາສາລາວ.

**ມາດຕາ 10 ວິທີການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ**

ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ແມ່ນປະຕິບັດຕາມວິທີການ ດັ່ງນີ້:

1. ກະຊວງຍຸຕິທຳ ເປັນຜູ້ອອກຂໍ້ຕົກລົງ, ຄຳແນະນຳ ແລ້ວມອບໃຫ້ກົມສົ່ງເສີມລະບົບຍຸຕິທຳ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ, ພ້ອມທັງສ້າງຄູ່ມື ແລະ ຈັດຝຶກອົບຮົມກ່ຽວກັບ

ວິທີການຈັດຕັ້ງປະຕິບັດ ໃຫ້ແກ່ພະນັກງານໃນຂອບເຂດທົ່ວປະເທດ;

2. ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ ແລະ ອົງການປົກຄອງບ້ານ ເປັນເຈົ້າການຄົ້ນຄວ້າ, ຜັນຂະຫຍາຍບັນດາເນື້ອໃນ ແລະ ວິທີການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ເປັນແຜນການ, ໂຄງການລະອຽດຢູ່ໃນຂັ້ນຂອງຕົນ ໂດຍມີການສົມທົບກັບພາກສ່ວນຕ່າງ ທີ່ກ່ຽວຂ້ອງ;

3. ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ ແລະ ອົງການປົກຄອງບ້ານ ເປັນຜູ້ປະສານງານ, ຊຸກຍູ້, ຕິດຕາມ ແລະ ສັງລວມບັນຫາຕ່າງໆຊ່ວຍຄະນະພັກ ແລະ ອົງການປົກຄອງຂັ້ນຂອງຕົນ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ໃນແຕ່ລະໄລຍະ, ໃນນີ້ມອບໃຫ້ຫົວໜ້າພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫົວໜ້າຫ້ອງການຍຸຕິທຳເມືອງ, ນາຍບ້ານ ເປັນຜູ້ຮັບຜິດຊອບໂດຍກົງຕໍ່ວຽກງານດັ່ງກ່າວ;

4. ຄະນະພັກຮາກຖານກຸ່ມບ້ານ ເປັນຜູ້ຊີ້ນຳ-ນຳພາແຕ່ລະກຸ່ມບ້ານໃນການຈັດຕັ້ງປະຕິບັດ. ຫ້ອງການຍຸຕິທຳເມືອງ ສົມທົບກັບໜ່ວຍງານກໍ່ສ້າງຮາກຖານຂອງເມືອງ, ພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງບ້ານ ເປັນຜູ້ຕິດຕາມ, ກວດກາ, ຊຸກຍູ້, ຊີ້ນຳ, ແນະນຳ ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ໃຫ້ເປັນປົກກະຕິ, ຕໍ່ເນື່ອງ ແລະ ໃຫ້ມີປະສິດທິຜົນ;

5. ກົມສົ່ງເສີມລະບົບຍຸຕິທຳ, ກົມໂຄສະນາເຜີຍແຜ່ກົດໝາຍ, ກົມຈັດຕັ້ງ ແລະ ພະນັກງານ, ສະຖາບັນຍຸຕິທຳແຫ່ງຊາດ, ຫ້ອງການກະຊວງຍຸຕິທຳ, ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຂອງກະຊວງຍຸຕິທຳ ຕ້ອງສົມທົບກັນເພື່ອຄົ້ນຄວ້າສ້າງແຜນການ, ໂຄງການ ແລະ ກິດຈະການ, ຂັ້ນແຜນງົບປະມານໃຫ້ແກ່ວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍໃນທົ່ວປະເທດ ແຕ່ລະປີໃຫ້ທັນຕາມກຳນົດເວລາ.

## ໝວດທີ 3

## ການຄຸ້ມຄອງ - ກວດກາ

## ວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

### ມາດຕາ 11 ການຄຸ້ມຄອງ

- ຢູ່ຂັ້ນສູນກາງ ແມ່ນກົມສົ່ງເສີມລະບົບຍຸຕິທຳ, ກະຊວງຍຸຕິທຳ ເປັນຜູ້ຄຸ້ມຄອງ ແລະ ກວດກາທາງດ້ານວິຊາການ ພາຍໃຕ້ການຊີ້ນຳຂອງລັດຖະມົນຕີກະຊວງຍຸຕິທຳ;

- ຢູ່ຂັ້ນແຂວງ, ນະຄອນຫຼວງ ແມ່ນຢູ່ໃຕ້ການຊີ້ນຳຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານກໍ່ສ້າງຮາກຖານຂອງແຂວງ, ນະຄອນຫຼວງ ຊຶ່ງມີພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຊ່ວຍທາງດ້ານວິຊາການ ໂດຍປະສານສົມທົບກັບຫ້ອງການກໍ່ສ້າງຮາກຖານການເມືອງຂອງແຂວງ, ນະຄອນຫຼວງ;

- ຢູ່ຂັ້ນເມືອງ ແມ່ນຂຶ້ນກັບການຊີ້ນຳ-ນຳພາຂອງເຈົ້າເມືອງ ຫຼື ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານກໍ່ສ້າງຮາກຖານການເມືອງ ຊຶ່ງມີຫ້ອງການຍຸຕິທຳເມືອງ ເປັນຜູ້ຊ່ວຍວຽກທາງດ້ານວິຊາການ ໂດຍປະສານສົມທົບກັບໜ່ວຍງານກໍ່ສ້າງຮາກຖານການເມືອງຂອງເມືອງ;

- ຢູ່ຂັ້ນກຸ່ມບ້ານ ແມ່ນຂຶ້ນກັບການຊີ້ນຳ-ນຳພາຂອງເລຂາຄະນະພັກ ຫຼື ຮອງເລຂາຄະນະພັກຮາກຖານກຸ່ມບ້ານ;

- ຢູ່ຂັ້ນບ້ານ ແມ່ນຂຶ້ນກັບການຊີ້ນຳ-ນຳພາຂອງນາຍບ້ານ ຫຼື ຮອງນາຍບ້ານ, ໃນນີ້ຄະນະແກ້ໄຂຂໍ້ຂັດແຍ່ງຂອງບ້ານ ເປັນຜູ້ຮັບຜິດຊອບຊ່ວຍອົງການປົກຄອງບ້ານໃນການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ.

**ມາດຕາ 12 ການກວດກາ**

- ກົມສົ່ງເສີມລະບົບຍຸຕິທຳ, ກະຊວງຍຸຕິທຳ ເປັນຜູ້ຕິດຕາມ, ສັງລວມສະພາບການຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃນຂອບເຂດທົ່ວປະເທດເປັນແຕ່ລະໄລຍະ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເພື່ອລາຍງານໃຫ້ລັດຖະມົນຕີກະຊວງຍຸຕິທຳ;

- ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນເຈົ້າການຕິດຕາມ, ສັງລວມການຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍຂອງແຕ່ລະເມືອງທົ່ວແຂວງຂອງຕົນ ເພື່ອລາຍງານໃຫ້ຄະນະພັກ-ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງຍຸຕິທຳ ເປັນປົກກະຕິ;

- ຫ້ອງການຍຸຕິທຳເມືອງ ເປັນເຈົ້າການຕິດຕາມ, ສັງລວມການຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ພາຍໃນຂອບເຂດເມືອງຂອງຕົນ ເພື່ອລາຍງານໃຫ້ຄະນະພັກ-ອົງການປົກຄອງເມືອງ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນປົກກະຕິ;

- ອົງການປົກຄອງບ້ານ ເປັນເຈົ້າການຕິດຕາມ, ສັງລວມການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍໃນຂອບເຂດບ້ານຂອງຕົນ ເພື່ອລາຍງານໃຫ້ຄະນະພັກຮາກຖານກຸ່ມບ້ານ, ຄະນະພັກ ແລະ ອົງການປົກຄອງເມືອງ ໂດຍຜ່ານຫ້ອງການຍຸຕິທຳເມືອງ ເປັນປົກກະຕິ;

- ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ສົມທົບກັບຫົວໜ້າໜ່ວຍໃນບ້ານ ເປັນເຈົ້າການຕິດຕາມ, ສັງລວມການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍໃນບ້ານຂອງຕົນ ເພື່ອລາຍງານໃຫ້ຄະນະໜ່ວຍພັກ ແລະ ອົງການປົກຄອງບ້ານ ເປັນປົກກະຕິ.

## ໝວດທີ 4
## ນະໂຍບາຍ ແລະ ມາດຕະການຕໍ່ຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ

**ມາດຕາ 13 ນະໂຍບາຍຕໍ່ຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ**

ຄອບຄົວ ແລະ ບ້ານ ທີ່ເປັນຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຈາກອົງການປົກຄອງເມືອງ, ແຂວງ, ນະຄອນຫຼວງ ຫຼື ກະຊວງຍຸຕິທຳ.

**ມາດຕາ 14 ມາດຕະການຕໍ່ຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ**

ຄອບຄົວ ແລະ ບ້ານທີ່ໄດ້ປະກາດເປັນຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍແລ້ວ ຖ້າຫາກມີການລະເມີດມາດຕະຖານທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຫຼື ລະເມີດກົດໝາຍ ແລະ ລະບຽບການຈົນເປັນຄະດີຟ້ອງຂຶ້ນສານຕັດສິນແລ້ວ ຈະບໍ່ໄດ້ຮັບການພິຈາລະນາ ແລະ ມອບໃບຢັ້ງຢືນໃຫ້ເປັນຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍໃນປີນັ້ນ ແລະ ຈະໄດ້ປົດປ້າຍບ້ານແບບຢ່າງປະຕິບັດກົດໝາຍໃນຕະຫຼອດປີ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ໃຫ້ຫ້ອງການ, ກົມສົ່ງເສີມລະບົບຍຸຕິທໍາ, ກົມໂຄສະນາເຜີຍແຜ່ກົດໝາຍ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມ, ສະຖາບັນຍຸຕິທໍາແຫ່ງຊາດ, ສະຖາບັນຍຸຕິທໍາພາກເໜືອ, ພາກກາງ ແລະ ພາກໃຕ້, ພະແນກຍຸຕິທໍາແຂວງ, ນະຄອນຫຼວງ, ອົງການປົກຄອງທ້ອງຖິ່ນ, ຫ້ອງການຍຸຕິທໍາເມືອງ, ກຸ່ມບ້ານ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 209/ກຍ, ລົງວັນທີ 19 ຕຸລາ 2009 ວ່າດ້ວຍການສ້າງຄອບຄົວ ແລະ ບ້ານປອດຄະດີ.

**ລັດຖະມົນຕີ,**

ໄຊສີ ສັນຕິວົງ